ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===================000===================

ກະຊວງຍຸຕິທຳ

ເລກທີ 695 /ກຍ

ນະຄອນຫຼວງວຽງຈັນ, ວັນທີ 29 JUL 2016

# ຂໍ້ຕົກລົງ

## ຂອງລັດຖະມົນຕີກະຊວງຍຸຕິທຳ
## ວ່າດ້ວຍການແບ່ງຄວາມຮັບຜິດຊອບ ຂອງອົງການທະບຽນສານ

- ອີງຕາມ ກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 404/ກຍ, ລົງວັນທີ 23 ພະຈິກ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຍຸຕິທຳ;
- ອີງຕາມ ໜັງສືສະເໜີຂອງກົມທະບຽນສານ ສະບັບເລກທີ 264/ກຍ.ກທສ, ລົງວັນທີ 08 ກໍລະກົດ 2016.

## ລັດຖະມົນຕີ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດການແບ່ງຄວາມຮັບຜິດຊອບ ລະຫວ່າງ ກົມທະບຽນສານ, ຫ້ອງການ ແລະ ໜ່ວຍງານທະບຽນສານ ແນໃສ່ຮັບປະກັນການຢັ້ງຢືນຄວາມຖືກຕ້ອງ ຂອງສັນຍາ ແລະ ເອກະສານອື່ນ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ ແລະ ມີປະສິດທິຜົນສູງ ປະກອບສ່ວນສຳຄັນເຂົ້າໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳໃນສັງຄົມ.

### ມາດຕາ 2 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບກົມທະບຽນສານ, ຫ້ອງການ ແລະ ໜ່ວຍງານທະບຽນສານທີ່ຂຶ້ນກັບການຄຸ້ມຄອງ ຂອງກະຊວງຍຸຕິທຳເທົ່ານັ້ນ, ສ່ວນໜ່ວຍງານທະບຽນສານປະຈຳສະຖານທູດ ຫຼື ສະຖານກົງສຸນ ຂອງ ສປປ ລາວ ຢູ່ຕ່າງປະເທດ ແມ່ນຂຶ້ນກັບການຄຸ້ມຄອງຂອງກະຊວງການຕ່າງປະເທດ ແລະ ມີລະບຽບການສະເພາະ.

### ມາດຕາ 3 ຄວາມຮັບຜິດຊອບຂອງກົມທະບຽນສານ

ກົມທະບຽນສານ ເປັນເສນາທິການໃຫ້ລັດຖະມົນຕີ ໃນການຄົ້ນຄວ້າຫັນກົດໝາຍ ເປັນນິຕິກຳໃຕ້ກົດໝາຍ; ສ້າງຫຼັກສູດຝຶກອົບຮົມພະນັກງານທັງໄລຍະສັ້ນ ແລະ ໄລຍະຍາວ; ໂຄສະນາເຜີຍແຜ່, ສຶກສາອົບຮົມກົດໝາຍວ່າດ້ວຍທະບຽນສານ ແລະ ລະບຽບການອື່ນກ່ຽວກັບວຽກງານທະບຽນສານ; ຮັບຜິດຊອບໃນການຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງສັນຍາ ແລະ ເອກະສານອື່ນ ຄື: